ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ

ຫ້ອງການ

ເລກທີ 322 /ຫກ

ນະຄອນຫຼວງວຽງຈັນ, ວັນທີ 20 ມັງກອນ 2026

**ໜັງສືເຊີນເຂົ້າຮ່ວມແຂ່ງຂັນປະມູນ**

**ເຖິງ:** ບໍລິສັດ-ຫ້າງຮ້ານ, ວິສະຫະກິດການພິມ ທີ່ມີໃບອະນຸຍາດດໍາເນີນທຸລະກິດ, ໃບທະບຽນວິສະຫະກິດ, ໃບທະບຽນອາກອນ ທີ່ຖືກຕ້ອງຕາມກົດໝາຍ.

**ເລື່ອງ:** ຂໍເຊີນເຂົ້າຮ່ວມການປະມູນສົມທຽບລາຄາ ຈັດຊື້ອຸປະກອນຮັບໃຊ້ການຮຽນການສອນຢູ່ ຫ້ອງກຽມປະຖົມ, ກຸ່ມຮຽນຜ່ານການຫຼິ້ນ, ການກຽມຄວາມພ້ອມໃນໄລຍະພັກແລ້ງ 10 ອາທິດ ຢູ່ 9 ເມືອງເປົ້າໝາຍຂອງໂຄງການ. ສໍາລັບການພັດທະນາວິຊາຊີບແບບຕໍ່ເນື່ອງຂອງຄູສອນຊັ້ນປະຖົມສຶກສາຢູ່ 12 ເມືອງເປົ້າໝາຍຂອງໂຄງການ.

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 4883/ຫກ, ລົງວັນທີ 23 ກັນຍາ 2022;
- ອີງຕາມ ບົດບັນທຶກຄວາມເຂົ້າໃຈໂຄງການປັບປຸງພື້ນຖານການຮຽນຮູ້ຂອງເດັກ ສະບັບລົງວັນທີ 29 ກໍລະກົດ 2025;
- ອີງຕາມ ຂໍ້ຕົກລົງແຕ່ງຕັ້ງ ຄະນະຮັບຜິດຊອບການຈັດຕັ້ງປະຕິບັດ ການຈັດຊື້-ຈັດຈ້າງ ອຸປະກອນຕ່າງໆທີ່ກ່ຽວຂ້ອງກັບ 3 ອົງປະກອບຂອງໂຄງການປັບປຸງພື້ນຖານການຮຽນຮູ້ຂອງເດັກ ສະບັບເລກທີ 9243/ສສກ, ລົງວັນທີ 18 ທັນວາ 2025;

ກະຊວງສຶກສາທິການ ແລະ ກິລາ ໄດ້ຮັບການຊ່ວຍເຫຼືອ ຈາກ ອົງການຮ່ວມມືສາກົນເພື່ອການສຶກສາ (GPE) ພາຍໃຕ້ກອງທຶນການຫັນປ່ຽນການສຶກສາ (STG) ເພື່ອຈັດຕັ້ງປະຕິບັດໂຄງການ ປັບປຸງຜົນການຮຽນຮູ້ຂັ້ນພື້ນຖານຂອງເດັກ (FLIP) ເຮັດໃຫ້ການຈັດຕັ້ງປະຕິບັດໂຄງການດັ່ງກ່າວ ເປັນໄປຕາມແຜນດໍາເນີນກິດຈະກໍາຂອງໂຄງການ ກົມແຜນການ ກະຊວງສຶກສາທິການ ແລະ ກິລາ ໃນນາມຜູ້ຄຸ້ມຄອງໂຄງການມີແຜນຈັດຊື້ອຸປະກອນການສອນຂອງຫ້ອງກຽມປະຖົມ, ກຸ່ມຮຽນຜ່ານການຫຼິ້ນ, ການກຽມຄວາມພ້ອມໃນໄລຍະພັກແລ້ງ 10 ອາທິດ ຢູ່ 9 ເມືອງເປົ້າໝາຍ ແລະ ການຈັດພິມຊຸດເອກະສານສໍາລັບການພັດທະນາວິຊາຊີບແບບຕໍ່ເນື່ອງຂອງຄູສອນຊັ້ນປະຖົມສຶກສາຢູ່ 12 ເມືອງເປົ້າໝາຍຂອງໂຄງການ.

ດັ່ງນັ້ນ, ກະຊວງສຶກສາທິການ ແລະ ກິລາ ຂໍເຊີນ ບໍລິສັດ-ຫ້າງຮ້ານ, ວິສະຫະກິດການພິມ ທີ່ມີທະບຽນວິສະຫະກິດຄົບຖ້ວນ ຖືກຕ້ອງຕາມກົດໝາຍ ຂອງ ສປປ ລາວ ທີ່ມີຄວາມສົນໃຈສາມາດພົວພັນເອົາ ຂໍ້ມູນ ແລະ ເອກະສານຕ່າງໆທີ່ກ່ຽວຂ້ອງກັບການປະມູນໄດ້ທີ່ ກົມແຜນການ, ກະຊວງສຶກສາທິການ ແລະ ກິລາ, ຕຶກ A 1, ຊັ້ນ 3 (ຫ້ອງເບີ 306). ເບີໂທຕິດຕໍ່ 020 2826 6364, 020 77989988, ເລີ່ມຕັ້ງແຕ່ວັນທີ 21 ມັງກອນ 2026 ຫາ ວັນທີ 24 ກຸມພາ 2026. (ເວລາ 35 ວັນ)

ເອກະສານການປະມູນສົມທຽບລາຄາ ຈະໄດ້ເປີດຊອງໜ້າຄະນະກໍາມະການ ຮັບຜິດຊອບການຈັດຕັ້ງປະຕິບັດການຈັດຊື້-ຈັດຈ້າງ ແລະ ຕົວແທນຂອງບໍລິສັດ ທີ່ຍື່ນຊອງປະມູນ ໃນວັນທີ 26 ກຸມພາ 2026 ຢູ່ທີ່ຫ້ອງປະຊຸມ ກະຊວງສຶກສາທິການ ແລະ ກິລາ ຫ້ອງ 405 (ຕຶກ A 1,ຊັ້ນ 4), ເວລາ 14:00 ໂມງ.

**ຫົວໜ້າຫ້ອງການ**

ທ. ປອ. ຫຼ້າວັນ ວົງຄໍາສານ